- 639.3
1202

ຄູ່ມື No. 006

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

———ooo———

ກະຊວງກະສິກຳ ແລະ ປ່າໄມ້
ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້
ສູນຄົ້ນຄ້ວາການປະມົງ

ຄູ່ມືຂະແໜງ

# ກ່ຽວກັບການລ້ຽງປາຫຼາຍຊະນິດຮ່ວມກັບການລ້ຽງໄກ່



ກໍລະກົດ, 2002

ສາລະບານ


1. ການເລືອກ ແລະ ກຽມສະຖານທີ່ລ້ຽງ ........ 1
2. ແນວພັນທີ່ຈະນຳມາລ້ຽງ ........ 2
3. ການປ່ອຍ ແລະ ອັດຕາການປ່ອຍລ້ຽງ ........ 3
4. ອາຫານ ແລະ ການໃຫ້ອາຫານ ........ 3
5. ການດູແລຮັກສາ ........ 4
6. ການໄລ່ລຽງເສດຖະກິດ ........ 4

## ຄຳນຳ

ປະຊາຊົນຢູ່ຕາມຊານເມືອງ ແລະ ເຂດຊົນນະບົດມີຄວາມສາມາດໃນການລ້ຽງປາແບບປະສົມປະສານກັບການລ້ຽງສັດ ແລະ ປູກຝັງຢູ່ຕາມໜອງປາທຳມະຊາດ ແລະ ໜອງທີ່ສ້າງຂຶ້ນເອງ ແຕ່ວ່າຜົນຜະລິດຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ດັ່ງນັ້ນເພື່ອຍົກຜົນຜະລິດ ແລະ ຫຼຸດຜ່ອນຕົ້ນທຶນໃນການຜະລິດປາຈຶ່ງເຫັນໄດ້ຄວາມຈຳເປັນໃນການຄົ້ນຄວ້າທົດລອງ ແລະ ການຊອກຫາເຕັກນິກວິຊາການທີ່ແທດເໝາະກັບເງື່ອນໄຂ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ.

ການສຳຫຼວດຂອງການລ້ຽງປາແບບປະສົມປະສານໃນ 3 ແຂວງຄື: ກຳແພງນະຄອນວຽງຈັນ, ຫຼວງພະບາງ ແລະ ສະຫວັນນະເຂດໄດ້ນຳໃຊ້ແບບຟອມສຳພາດ 30 ຄອບຄົວໃນແຕ່ລະແຂວງເຫັນໄດ້ວ່າ: ອັດຕາການປ່ອຍປາໃນແຕ່ລະແຂວງມີຄວາມແຕກຕ່າງກັນເຊັ່ນ: ຢູ່ແຂວງຫຼວງພະບາງອັດຕາການປ່ອຍປາຫຼາຍກວ່າກຳແພງນະຄອນວຽງຈັນ ແລະ ແຂວງສະຫວັນນະເຂດແຕ່ການປ່ອຍປາໂດຍສະເລ່ຍ 3 ແຂວງແມ່ນ 42,000ໂຕ/ເຮັກຕາ.

ແນວພັນທີ່ນິຍົມລ້ຽງ ແລະ ບໍລິໂພກສ່ວນຫຼາຍແມ່ນປານິນ, ປາໃນ, ປາປາກ ນອກຈາກນັ້ນຍັງມີ ປາຈີນ ແລະ ປາອິນເດຍ. ສັດທີ່ນິຍົມລ້ຽງຮ່ວມກັບກັບປາສ່ວນຫຼາຍແມ່ນໄກ່ພັນຊີ້ນ, ໄກ່ພັນໄຂ່, ເປັດ ແລະ ໝູພັນ. ອາຫານທີ່ໃຊ້ໃນການລ້ຽງປາມີຮຳ, ເຂົ້າປຸ່ນ, ສາລີ, ມັນຕົ້ນ ແລະ ຜັກຊະນິດຕ່າງໆທີ່ຫາໄດ້ງ່າຍຕາມທ້ອງຖິ່ນ ແລະ ມີລາຄາຖືກ.

## ຂັ້ນຕອນໃນການລ້ຽງປາຫຼາຍຊະນິດປະສົມປະສານກັບການລ້ຽງສັດ

1. <u>ການເລືອກ ແລະ ກຽມສະຖານທີ່ລ້ຽງ</u>

ການເລືອກ ແລະ ການກຽມສະຖານທີ່ຕ້ອງໃຫ້ເໝາະສົມດັ່ງນີ້:

- ໜອງຕ້ອງສາມາດຖ່າຍເທນ້ຳໄດ້ສະດວກ.
- ບໍ່ເປັນທີ່ຕ່ຳ ຫຼື ສູງເກີນໄປ.
- ພື້ນທີ່ມີຄວາມສາມາດຄວບຄຸມປະລິມານນ້ຳຕາມຄວາມຕ້ອງການ.
- ສະດວກໃນການເບິ່ງແຍງ ແລະ ຮັກສາ.
- ສະດວກໃນການຂົນສົ່ງ.

*ກ. ໜອງປາ:*

*ຖ້າເປັນໜອງໃໝ່ຄວນປະຕິບັດດັ່ງນີ້:*

- ໃສ່ຝຸ່ນຂາວປະມານ 60–150 ກິໂລກຣາມ/ ໄລ່ ການໃສ່ປູນຂາວນັ້ນຂຶ້ນກັບຄວາມເປັນກົດເປັນດ່າງ (pH) ຂອງດິນ.
- ໃສ່ຝຸ່ນຄອກເພີ້ມຄວາມອຸດົມສົມບູນຂອງດິນໃນອັດຕາສ່ວນ 250–500 ກິໂລກຣາມ/ ໄລ່ ປ່ອຍນ້ຳເຂົ້າໄວ້ປະມານ 1-2 ເດືອນ ເພື່ອໃຫ້ເກີດອາຫານທຳມະຊາດພວກໄຮນ້ຳພືດ ແລະ ໄຮນ້ຳສັດ.

*ຖ້າເປັນໜອງເກົ່າຄວນປະຕິບັດດັ່ງນີ້:*

- ກ່ອນຈະນຳປາມາປ່ອຍລ້ຽງຄວນປ່ອຍ ຫຼື ດູດນ້ຳອອກໃຫ້ໝົດ.
- ກຳຈັດສັດຕູຂອງປາໃຫ້ຫມົດ.
- ອານາໄມພື້ນໜອງແຄມໜອງ, ເອົາພືດໄມ້ ຫຼື ເສດວັດສະດຸອື່ນໆອອກ.
- ໃສ່ປູນຂາວໃນອັດຕາ 60 ກິໂລກຣາມ/ໄລ່ ເພື່ອປັບປຸງຄຸນນະພາບນ້ຳໃຫ້ຄວາມເປັນກົດ - ດ່າງ (pH) 6–8 ແລະ ຂ້າເຊື້ອພະຍາດ ແລ້ວຕາກໜອງໄວ້ປະມານ 1 ອາທິດ.

- ປ່ອຍນໍ້າເຂົ້າໃສ່ໜອງປະໄວ້ 1 ເດືອນເພື່ອໃຫ້ເກີດອາຫານທໍາມະຊາດໃນໜອງປາເຊັ່ນ: ໄຮນໍ້າພືດ (Phytoplankton), ແລະ ໄຮນໍ້າສັດ (zooplankton).

*ຂ. ຄອກໄກ່:*

ສ້າງຄອກໄກ່ໃສ່ໜອງທີ່ມີຂະໜາດລວງຍາວ 8 ແມັດ, ກວ້າງ 5 ແມັດ ແລະ ສູງ 2 ແມັດ, ມີເນື້ອທີ່ 40 ຕາແມັດ (ມ2), ວັດຖຸອຸປະກອນທີ່ນໍາມາສ້າງຄອກໄກ່ມີດັ່ງນີ້:

- ເສົາໄມ້ ຫຼື ເສົາສີມັງ
- ໄມ້ໄຜ່
- ໄມ້ຈິງ
- ຕາໜ່າງດໍາ
- ໄພຫຍ້າ
- ແຕະ (ສໍາລັບແອ້ມ)
- ອື່ນໆ

2. <u>ແນວພັນທີ່ຈະນໍາມາລ້ຽງ</u>

*ກ. ແນວພັນປາ:*

ສ່ວນໃຫຍ່ທີ່ຊາວກະສິກອນນິຍົມລ້ຽງຮ່ວມກັບສັດປີກແມ່ນຈໍາພວກປານິນ, ປາໄນ, ປາປາກ, ປາຈີນ ແລະ ປາອິນເດຍ, ແຕ່ຊະນິດທີ່ໄດ້ຮັບຜົນດີແມ່ນຊະນິດລຸ່ມນີ້:

*ປານິນ:* ເປັນປາສາມາດລ້ຽງງ່າຍ, ຈະເລີນເຕີບໃຫຍ່ໄວ ແລະ ທົນຕໍ່ສະພາບແວດລ້ອມຕ່າງໆໄດ້ດີ ປາຊະນິດນີ້ກິນພືດ ແລະ ສັດ (omnivores) ເຊັ່ນ: ອາຫານຈໍາພວກໄຮນໍ້າພືດ (phytoplankton), ໄຮນໍ້າສັດ (zooplankton), ພືດນໍ້າ, ສັດຂະໜາດນ້ອຍ ຖ້າລ້ຽງປານິນໃນສະພາບແວດລ້ອມທີ່ດີໃນໄລຍະ 6–8 ເດືອນປາຈະມີນໍ້າ ໜັກປະມານ 300-500 ກຣາມ ເປັນປາທີ່ຂະຫຍາຍພັນໄດ້ງ່າຍ ແລະ ຕະຫລອດປີ.

ຮູບປາ

ປານິນ (Tilapia nilotica)

*ປາໄນ:* ເປັນປານໍາເຂົ້າຈາກຕ່າງປະເທດ (exotic fish), ປາທີ່ລ້ຽງງ່າຍຈະເລີນເຕີບໃຫຍ່ໄວ ແລະ ທົນຕໍ່ສະພາບແວດລ້ອມໄດ້ດີ ປາຊະນິດນີ້ກິນອາຫານພືດ ແລະ ສັດ (omnivores) ເຊັ່ນ: ອາຫານຈໍາພວກໄຮພືດ (phytoplankton), ໄຮນໍ້າສັດ (zooplankton), ພືດນໍ້າ, ແລະ ກິນສັດນໍ້າຂະໜາດນ້ອຍ ຖ້າລ້ຽງປາໄນຢູ່ສະພາບແວດລ້ອມທີ່ດີ ຈະມີນໍ້າໜັກປະມານ 400-700 ກຣາມ ເປັນປາທີ່ຂະຫຍາຍພັນໄດ້ງ່າຍໃນລະດູໜາວ.

ຮູບປາ

ປາໄນ (cyprinus carpio)

*ປາປາກ:* ເປັນປາພື້ນເມືອງທີ່ລ້ຽງງ່າຍ, ຈະເລີນເຕີບໂຕໃຫຍ່ໄວເປັນປາທີ່ຕ້ອງການນໍ້າທີ່ມີຄຸນນະພາບດີເມື່ອນໍ້າເນົ່າເສຍປາຈະຕາຍ, ຈໍາພວກປາກິນພືດ (herbivores), ພືດນໍ້າ, ແໜ, ໄຄນໍ້າ ແລະ ກິນສັດນໍ້າຂະໜາດນ້ອຍ. ຖ້າລ້ຽງປາປາກໃນສະພາບເງື່ອນໄຂທີ່ດີໃນເວລາ 6–8 ເດືອນຈະມີນໍ້າໜັກປະມານ 300–400 ກຣາມ, ເປັນປາທີ່ຂະຫຍາຍ ພັນໄດ້ງ່າຍໃນລະດູຝົນ.

ຮູບປາ

*ປາປາກ (puntius gonionotus)*

*ຂ. ແນວພັນໄກ່:* ແນວພັນທີ່ຈະນຳມາລ້ຽງຄວນເປັນແນວພັນທີ່ນິຍົມບໍລິໂພກລ້ຽງໃຫຍ່ໄວ.
*ໄກ່ພັນຊີ້ນ:* ຄວນມີນ້ຳໜັກສະເລ່ຍ 35–40 ກຣາມ/ໂຕ, ມາຈາກຟາມທີ່ເຊື່ອຖືໄດ້.

ຮູບໄກ່
*ໄກ່ພັນຊີ້ນ (broiler)*

3. ການປ່ອຍ ແລະ ອັດຕາການປ່ອຍລ້ຽງ

*ກ. ການປ່ອຍປາ:*

- ການປ່ອຍປາຄວນປ່ອຍໃນເວລາຕອນເຊົ້າ ຫຼື ຕອນແລງ (4–6ໂມງ) ກ່ອນປ່ອຍປາລົງລ້ຽງຄວນເອົາຖົງປາແຊ່ໃສ່ໜອງລ້ຽງປະມານ 5–10 ນາທີແລ້ວປ່ອຍອອກ.
- ອັດຕາການປ່ອຍປາ 20.000-25.000ໂຕ/ ເຮັກຕາ.
- ປ່ອຍປາ 3 ຊະນິດຮ່ວມກັນໃນອັດຕາສ່ວນດັ່ງນີ້: ປານິນ 50 %, ປາໄນ 25% ແລະ ປາປາກ 25%.

*ຂ. ການປ່ອຍໄກ່:*

- ໄກ່ທີ່ນຳມາປ່ອຍຄວນຈະມີນ້ຳໜັກ 35-40 ກຣາມ.
- ປ່ອຍໄກ່ກ່ອນ 1 ອາທິດຈຶ່ງນຳປາມາປ່ອຍລ້ຽງ.

4. ອາຫານ ແລະ ການໃຫ້ອາຫານ

*ກ. ອາຫານ ແລະ ການໃຫ້ອາຫານໄກ່:*

- ອາຫານໄກ່ພັນຊີ້ນຄວນໃຊ້ອາຫານສຳເລັດຮູບເບີ 201 ແລະ 202 ຈາກໂຮງງານອາຫານສັດໂດຍມີທາດຊີ້ນ (protein) ສູງກວ່າ 30% ໃຫ້ 5% ຂອງນ້ຳໜັກໂຕຕໍ່ມື້ ຕົວຢ່າງ: ໄກ່ໂຕໜຶ່ງ 1000 ກຣາມຕ້ອງໃຫ້ 50 ກຣາມຕໍ່ວັນ.

*ຂ. ອາຫານ ແລະ ການໃຫ້ອາຫານປາ.*

- ອາຫານປາ ຄວນນຳໃຊ້ອາຫານທີ່ມີຈາກທ້ອງຖິ່ນເຊັ່ນ: ຮຳ, ເຂົ້າປຸ້ນ, ສາລີ ແລະ ອື່ນໆ. ນອກຈາກນັ້ນຍັງໃຊ້ສິ່ງເສດເຫຼືອຈາກໄກ່ເຊັ່ນ: ເສດອາຫານຂອງໄກ່ ແລະ ຂີ້ໄກ່. ຮຳມີທາດຊີ້ນປະມານ 10–12 % ແລະ ຂີ້ໄກ່ມີທາດຊີ້ນປະມານ 16-18%.
- ການໃຫ້ອາຫານປາແມ່ນຄິດໄລ່ໂດຍສະເລ່ຍ 5% ຂອງນ້ຳໜັກຕໍ່ວັນ.
- ຕົວຢ່າງການຄິດໄລ່ປະລິມານອາຫານຈະຄິດໄລ່ 2 ອາທິດຕໍ່ຄັ້ງ

| ໄລຍະເວລາ (ອາທິດ) | % ຂອງອາຫານ/ນ້ຳໜັກປາ |
|---|---|
| 1-2 | 8 |
| 3-4 | 7 |
| 5-6 | 6 |
| 7-8 | 5 |
| 9-10 | 5 |
| 11-12 | 5 |
| 13-14 | 5 |
| 15-16 | 4.5 |
| 17-18 | 4.5 |
| 19-20 | 4.5 |
| 21-22 | 4.5 |
| 23-24 | 4.5 |
| ສະເລ່ຍ | 5.2 |

5. <u>ການດູແລຮັກສາ</u>

- ຮັກສາລະດັບນໍ້າໃຫ້ຢູ່ໃນລະດັບ 1-2 ແມັດຂຶ້ນກັບຂະໜາດຂອງໜອງ.
- ຖ້ານໍ້າມີການເນົ່າເສຍຄວນປ່ຽນນໍ້າ ½ ຂອງປະລິມານນໍ້າໃນໜອງ.
- ຄວນກວດກາເບິ່ງລະບົບການລະບາຍນໍ້າໃນເວລານໍ້າຖ້ວມ.
- ຄຸນນະພາບນໍ້າດີ ຫຼື ບໍ່ໃນເວລາປ່ອຍນໍ້າເຂົ້າໃສ່ໜອງ.
- ສັງເກດເບິ່ງສັດລ້ຽງເປັນປົກກະຕິ.

6. <u>ການໄລ່ລຽງເສດຖະກິດ</u>

ການໄລ່ລຽງເສດຖະກິດແມ່ນບໍ່ໄດ້ຄິດໄລ່ມູນຄ່າໜອງ, ຄ່າດູດໜອງ, ຄ່າໄຟຟ້າ ແລະ ຄ່າຂົນສົ່ງຕ່າງໆ.
*ຕົວຢ່າງ:* ການລ້ຽງໄກ່ 3 ຊຸດຕໍ່ການລ້ຽງປາ 1 ຊຸດ ໃຊ້ເວລາໃນການລ້ຽງ 6 ເດືອນ.

- ຂະໜາດຂອງໜອງປາ 2000 ຕາແມັດ
- ປ່ອຍປາລ້ຽງ 4000 ໂຕ.
- ລ້ຽງໄກ່ຊຸດລະ 260 ໂຕ x 3 ຊຸດ = 780 ໂຕ.

ການໄລ່ລຽງເສດຖະກິດຂອງການລ້ຽງໃນ 6 ເດືອນ

| | | |
|---|---|---|
| **ລາຍຈ່າຍ:** | **10,995,600** | **ກີບ** |
| **ການລ້ຽງໄກ່** | **8,553,200** | **ກີບ** |
| 1. ຊັບສົມບັດ: (ທຶນຄົງທີ່) | | ກີບ |
| - ຄອກ | 500,000 | ກີບ |
| - ອຸປະກອນ | 25,000 | ກີບ |
| - ແນວພັນ (ທຶນໝູນວຽນ) 780 ໂຕ x 2500 ກີບ | 1,950,000 | ກີບ |
| - ອາຫານ | 5,848,200 | ກີບ |
| - ຢາວັນຊີນ, ໄວຕາມິນ | 150,000 | ກີບ |
| - ແຮງງານ | 100,000 | ກີບ |
| 2. ການລ້ຽງປາ: | 2,442,400 | ກີບ |
| - ແນວພັນ | 1,200,000 | ກີບ |
| - ອາຫານ (ຮໍາ) | 1,142,400 | ກີບ |
| - ແຮງງານ | 100,000 | ກີບ |
| **ລາຍຮັບ:** | **13,785,000** | ກີບ |
| - ການຂາຍໄກ່ | 92,250,000 | ກີບ |
| - ການຂາຍປາ | 4,560,000 | ກີບ |
| **ດຸ່ນດ່ຽງ:** | **2,789,400** | ກີບ |

ສິ່ງທີ່ຄວນເອົາໃຈໃສ່

ແນວພັນທີ່ນໍາມາລ້ຽງຄວນເປັນແນວພັນທີ່ມີຄຸນນະພາບດີຈາກຟາມທີ່ເຊື່ອຖືໄດ້.
ຖ້າມີບັນຫາໃນການລ້ຽງຄວນປຶກສານັກວິຊາການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງ.